# ບົດຂ່າວ

## ພິທີລົງນາມບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍ ການຮ່ວມມືດ້ານການບໍລິການທະນາຄານ ລະຫວ່າງ ທຄຕລ ແລະ ທະນາຄານ KEB Hana ຈາກ ສ. ເກົາຫຼີ. ວັນທີ 14 ກໍລະກົດ 2017.




ໃນວັນທີ 14 ກໍລະກົດ 2017, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ທະນາຄານ ເຄບີ ຮານາ (KEB Hana Bank) ຈາກ ສ. ເກົາຫຼີ ໄດ້ຈັດພິທີລົງນາມບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍ ການຮ່ວມມືດ້ານການບໍລິການທະນາຄານ. ການລົງນາມໃນຄັ້ງນີ້ ແມ່ນລົງນາມໂດຍ: ທ່ານ ລາໃຈ ຄັນພຣະວົງສ໌, ຮອງຜູ້ອໍານວຍການ ທຄຕລ ແລະ ທ່ານ ຄິມ ບູມ ເລ ຜູ້ຈັດການຝ່າຍດູແລລູກຄ້າ ແລະ ການລົງທຶນຕ່າງປະເທດ, ທະນາຄານ ເຄບີ ຮານາ.

ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມໃນຄັ້ງນີ້ ປະກອບມີ:

1.ທ່ານ ພູຂົງ ຈັນທະຈັກ, ຜູ້ອໍານວຍໃຫຍ່, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
2.ທ່ານ ໜູໄຊ ພູມສຸວັນ, ຮອງຫົວໜ້າກົມບໍລິການ, ທະນາຄານແຫ່ງ ສ.ປ.ປ ລາວ
3.ທ່ານ ແຊວ ຊັງ ຢູນ, ຜູ້ອໍານວຍການສູນ HRD ເກົາຫຼີ, EPS ປະຈໍາລາວ.
4.ທ່ານ ສຸລິຍາ ຄໍາວົງສາ, ຮອງຜູ້ອໍານວຍການ ສູນບໍລິການຈັດຫາງານ
5. ທ່ານ ບົວວັນ ສີມະລີວົງ, ຮອງຜູ້ອໍານວຍການ ທຄຕລ

ພ້ອມດ້ວຍ ຄະນະຜູ້ແທນຈາກທະນາຄານ ເຄບີ ຮານາ, ຄະນະພະແນກ, ຄະນະສາຂາ, ຄະນະສູນ, ພະນັກງານ ທຄຕລ, ພະນັກງານຈາກທະນາຄານແຫ່ງ ສ.ປ.ປ ລາວ ແລະ ສື່ມວນຊົນຈາກ ຫລາຍພາກສ່ວນ.

ການຮ່ວມມືລະຫວ່າງ ທຄຕລ ແລະ ທະນາຄານ ເຄບີ ຮານາ ຈາກ ສ. ເກົາຫຼີ, ໄດ້ມີການລິເລີ່ມສາຍພົວພັນຕັ້ງແຕ່ປີ 2016 ທີ່ຜ່ານມາ ດ້ານການສົ່ງເສີມດ້ານການຄ້າ ຫລື Banking Arrangement ໂດຍສະເພາະ ໂຄງການຂອງ ລັດຖະບານລາວ ແລະ ລັດຖະບານ ສ.ເກົາຫຼີ. ນອກຈາກນີ້, ທຄຕລ ກໍ່ໄດ້ເປີດບັນຊີ ກັບທາງທະນາຄານ ເຄບີ ຮານາ ເພື່ອຮອງຮັບທຸລະກຳການໂອນເງິນລະຫວ່າງລາວ-ເກົາຫຼີ ໂດຍສະເພາະ ເພື່ອຮອງຮັບການໂອນເງິນກັບບ້ານຂອງ ບັນດາແຮງງານລາວໄປເຮັດວຽກທີ່ ສ. ເກົາຫຼີ ແລະ ນັກສຶກສາລາວ ທີ່ໄປສຶກສາຢູ່ທີ່ ສ. ເກົາຫຼີ ກໍ່ຄືລູກຄ້າທົ່ວໄປ ຂອງທັງສອງທະນາຄານ.




ທ່ານ ລາໃຈ ຄັນພຣະວົງສ໌, ຮອງຜູ້ອຳນວຍການ ທຄຕລ ໄດ້ກ່າວໃນພິທີວ່າ: ປະຈຸບັນການໂອນເງິນຈາກ ລາວໄປປະເທດເກົາຫຼີ ຫລື ຈາກເກົາຫຼີມາລາວຜ່ານທາງ ທຄຕລ ແລະ ທະນາຄານ ເຄບີ ຮານາ ແມ່ນສາມາດ ໂອນໄດ້ໂດຍກົງ ໂດຍບໍ່ຜ່ານທະນາຄານຕົວແທນທີ່ຕ່າງປະເທດ ເຊິ່ງຈະເຮັດໃຫ້ລູກຄ້າໄດ້ຮັບເງິນໄວ ແລະ ຄ່າທຳນຽມ ບໍ່ສູງ. ນອກຈາກນັ້ນ, ທັງສອງທະນາຄານຍັງຈະໄດ້ສືບຕໍ່ໃນການພັດທະນາການບໍລິການຕ່າງໆຮ່ວມກັນໃນອະນາຄົດ ເພື່ອຮັບໃຊ້ສັງຄົມ.

ທ່ານ ຄິມ ບູມ ເລ, ຜູ້ຈັດການຝ່າຍດູແລລູກຄ້າ ແລະ ການລົງທຶນຕ່າງປະເທດ, ທະນາຄານ ເຄບີ ຮານາ ໄດ້ກ່າວໃນພິທີວ່າ: ທຄຕລ ແລະ ທະນາຄານ ເຄບີ ຮານາ ແມ່ນມີຄວາມຄ້າຍຄືກັນໂດຍພື້ນຖານ. ທະນາຄານ ເຄບີ ຮານາ ຄືກັບ ທຄຕລ ທີ່ມີຈຸດເລີ່ມຕົ້ນເປັນທະນາຄານລັດທີ່ມີພາລະກິດປະຕິບັດດ້ານການທະນາຄານສາກົນ, ການເງິນ ເພື່ອການຄ້າ ແລະ ໄດ້ເຕີບໃຫຍ່ຂະຫຍາຍຕົວເປັນທະນາຄານທຸລະກິດທີ່ໂດດເດັ່ນສຳລັບລູກຄ້າລາຍ ໃຫຍ່ ໃນໄລຍະ ທີ່ເສດຖະກິດມະຫາພາກຂອງ ສ. ເກົາຫຼີ ໄດ້ມີການຂະຫຍາຍຕົວ. ນັບແຕ່ ສ. ເກົາຫຼີ ໄດ້ປະກາດ ເອກະລາດໃນປີ 1967, ປະຈຸບັນ, ທະນາຄານ ເຄບີ ຮານາ ໄດ້ກາຍເປັນທະນາຄານໃນແຖວໜ້າຂອງປະເທດ ໂດຍສະເພາະດ້ານ ແລກປ່ຽນເງິນຕາ, ການຊຳລະສະສາງສາກົນ, ບໍລິການເງິນລົງທຶນຈາກຕ່າງປະເທດ, ເງິນໂອນຕ່າງ ປະເທດ, ບໍລິການ ການເງິນເພື່ອການຄ້າ ແລະ ອີກຫລາຍໆບໍລິການສາກົນ. ຈຸດປະສົງຫຼັກຂອງການຮ່ວມມືກັບ ທຄຕລ ແມ່ນເພື່ອສົ່ງເສີມການຕະຫລາດດ້ານເງິນໂອນຕ່າງປະເທດສຳລັບແຮງງານຈາກລາວທີ່ໄປເຮັດວຽກທີ່ ສ. ເກົາຫຼີ. ທະນາຄານເຄບີ ຮານາ ມີຄວາມຕັ້ງໃຈທີ່ຈະຮ່ວມມືກັບທະນາຄານທີ່ດີທີ່ສຸດໃນລາວ ກໍ່ຄື ທຄຕລ, ເຄບີ ຮານາ ຫວັງວ່າຈະໄດ້ເຫັນໝາກຜົນຄວາມສຳເລັດ ແລະ ຜົນປະໂຫຍດມາສູ່ທັງສອງຝ່າຍ ໃນຫລາຍໆດ້ານ ໃນອະນາຄົດ ອັນໃກ້ນີ້.